Save the Mekong
Our River Feeds Milions

# ຮ່າງ

# ຖະແຫລງການຮ່ວມຂອງອົງກອນຮ່ວມມືທາງສັງຄົມເພື່ອການປົກປັກຮັກສາແມ່ນ້ຳຂອງ ເຂື່ອນແມ່ນ້ຳຂອງຄືໄພຂົ່ມຂູ່ທີ່ຮ້າຍແຮງຕໍ່ຄວາມໝັ້ນຄົງດ້ານສະບຽງອາຫານ ແລະ ຊີວິດຊັບສິນຂອງບັນດາປະຊາຊາດໃນຂົງເຂດ:

*ອົງກອນສັງຄົມຮຽກຮ້ອງຕໍ່ບັນດາທ່ານນາຍົກລັດຖະມົນຕີປະເທດພາຄີອົງການແມ່ນ້ຳຂອງເພື່ອຂໍໃຫ້ລົບລ້າງການກໍ່ສ້າງເຂື່ອນໃນແມ່ນ້ຳຂອງ*

ເນື່ອງໃນໂອກາດກອງປະຊຸມຄະນະກຳມາທິການແມ່ນ້ຳຂອງຄັ້ງທີ 20 ທີ່ຈະໄດ້ຈັດຂຶ້ນໃນວັນທີ 26 ມິຖຸນາ 2014 ທີ່ຈະມາເຖິງນີ້ ທີ່ ບາງກອກ ປະເທດໄທ ອົງກອນຮ່ວມມືທາງສັງຄົມເພື່ອປົກປັກຮັກສາແມ່ນ້ຳຂອງຮຽກຮ້ອງມາຍັງພະນະທ່ານນາຍົກລັດຖະມົນຕີຂອງປະເທດ ກຳປູເຈັຍ, ສປປ ລາວ, ໄທ ແລະ ຫວຽດນາມ ເພື່ອພິຈາລະນາຮ່ວມກັນຢ່າງຮີບດ່ວນແກ້ໄຂບັນຫາໄພຂົ່ມຂູ່ທີ່ຈະເກີດຂຶ້ນຈາກໂຄງການເຂື່ອນ11 ແຫ່ງ ທີ່ຈະກໍ່ສ້າງຂຶ້ນໃນແມ່ນ້ຳຂອງ ແກ່ຄວາມໝັ້ນຄົງດ້ານສະບຽງອາຫານ ແລະ ຊີວິດ ແລະ ຊັບສິນຂອງປວງຊົນໃນເຂດພາກພື້ນແຫ່ງນີ້ ພະນະທ່ານທີ່ເປັນແກນນຳຂອງເຂດພາກພື້ນຈະຕ້ອງພິຈາລະນາດຳເນີນການລົບລ້າງໂຄງການກໍ່ສ້າງເຂື່ອນທີ່ມີແຜນກໍ່ສ້າງໄປແລ້ວນັ້ນເຊິ່ງໃນນັ້ນກໍ່ແມ່ນລວມທັງການກໍ່ສ້າງເຂື່ອນໄຊຍະບູລີ ແລະ ດອນສະໂຮງ ນຳອີກດ້ວຍ ພ້ອມກັນນັ້ນກໍ່ຕ້ອງຮັບປະກັນການຕັດສິນໃຈຕໍ່ການກະທຳໃດໆຕໍ່ສາຍແມ່ນ້ຳຂອງ ທີ່ເປັນແມ່ນ້ຳຮ່ວມຈະຕ້ອງເປັນໄປບົນພື້ນຖານການປະເມີນຜົນກະທົບຂ້າມຊາຍແດນ ແລະ ບົນພື້ນຖານຄວາມຮູ້ທາງວິທະຍາສາດເປັນຫຼັກ ໄປຄຽງຄູ່ກັບນັ້ນ ກໍ່ຈະຕ້ອງນັບຖືສິດທິບັນດາປະເທດພາຄີ ກໍ່ຄືປວງຊົນບົນພື້ນຖານຂະບວນການຕັດສິນໃຈທີ່ມີຄວາມໂປ່ງໃສ ແລະ ມີສ່ວນຮ່ວມຂອງທຸກຝ່າຍທີ່ກ່ຽວຂ້ອງ

ໃນຖານະທີ່ແມ່ນ້ຳຂອງເປັນສາຍນ້ຳແຫຼ່ງການປະມົງໃຫຍ່ທີ່ສຸດແຫ່ງໜຶ່ງຂອງໂລກ, ມັນໄດ້ຄ້ຳຈູນຊີວິດການກິນຢູ່ຂອງບັນດາປະຊາຊາດຫຼາຍກວ່າ 60 ລ້ານຄົນທີ່ດຳລົງຊີວິດຢູ່ພາຍໃນຂົງເຂດອ່າງແມ່ນ້ຳຂອງແຫ່ງນີ້ ແລະ ທີ່ສຳຄັນໄປກວ່ານັ້ນກໍ່ຄືຄວາມພິເສດເໜືອກວ່າສິ່ງອື່ນໃດກໍ່ຄື ແມ່ນ້ຳຂອງມີຄວາມມັ່ງຄັ່ງສົມບູນໄປດ້ວຍຊີວະນາໆພັນທາງນ້ຳ ຖືເປັນອັນດັບສອງຂອງໂລກລອງຈາກແມ່ນ້ຳອາມາຊອນ (Amazon). ຄວາມເຊື່ອມໂຍງ ແລະ ວົງຈອນລະດູນ້ຳຂຶ້ນ ແລະ ລົງຂອງແມ່ນ້ຳຂອງມີຄວາມສຳຄັນຍິ່ງຕໍ່ການຄົງໄວ້ເຊິ່ງຄວາມອຸດົມສົມບູນຂອງລະບົບນິເວດ, ການປະມົງ ແລະ ຄວາມສົມດູນຂອງ ຕະກອນໃນແມ່ນ້ຳຂອງ ເຊິ່ງສິ່ງເຫຼົ່ານີ້ລ້ວນແລ້ວແຕ່ເປັນສິ່ງຈຳເປັນຕໍ່ການຜະລິດສະບຽງອາຫານທີ່ມີຄວາມຍືນຍົງໃນເຂດທົ່ງຮາບທີ່ອຸດົມສົມບູນຂອງແມ່ນ້ຳຂອງ. ຍຸດທະສາດການປະເມີນສິ່ງແວດລ້ອມປີ 2010 ຂອງຄະນະກຳມາທິການແມ່ນ້ຳຂອງເປັນຫຼັກຖານທີ່ເຕືອນໃຫ້ຮູ້ເຖິງຄວາມຮ້າຍແຮງຂອງໄພຂົ່ມຂູ່ຕໍ່ສິ່ງແວດລ້ອມ, ສັງຄົມ ແລະ ວັດທະນະທຳອັນທີ່ຈະເກີດຈາກຜົນຂອງການກໍ່ສ້າງເຂື່ອນໄຟຟ້າໃນແມ່ນ້ຳຂອງ ຄວາມລຳບາກໃນການເຄື່ອນຍ້າຍຂອງປາເປັນຜົນທຳລາຍຕໍ່ການປະມົງ ແລະ ຊ່ອງວ່າງຄວາມຮູ້ທີ່ມີເປັນອຸປະສັກໃຫ້ແກ່ການຕັດສິນໃຈທີ່

ຖືກຕ້ອງ. ຜົນການສຶກສາໃນໄລຍະຕໍ່ມາ ໄດ້ສະທ້ອນໃຫ້ເຫັນເຖິງຄວາມຈໍາເປັນເພື່ອທີ່ຈະປັບປຸງຂະແໜງການວາງແຜນ ແລະ ນໍາໃຊ້ພະລັງງານໃຫ້ເປັນທາງເລືອກທີ່ມີຄວາມຍືນຍົງກວ່າ ທັງນີ້ກໍ່ເພື່ອບັນລຸຄວາມຕ້ອງການດ້ານການພັດທະນາຂອງເຂດພາກພື້ນ.

ເປັນສິ່ງສໍາຄັນທີ່ສຸດທີ່ຄະນະກໍາມາທິການແມ່ນໍ້າຂອງ ແລະ ບັນດາປະເທດສະມາຊິກພາຄີທັງຫຼາຍຕ້ອງຮັບຮູ້ຢ່າງເຕັມປ່ຽມເຖິງຄວາມຮ້າຍແຮງຂອງສະຖານະການທີ່ກໍາລັງຜະເຊີນຕໍ່ແມ່ນໍ້າຂອງ ແລະ ຮ່ວມມືກັນແກ້ໄຂໂດຍດ່ວນຕໍ່ໄພຂົ່ມຂູ່ຈາກເຂື່ອນທີ່ສ້າງຂຶ້ນໃນສາຍແມ່ນໍ້າຂອງ ແກ້ໄຂບັນຫາຄວາມຫຼົ້ມເຫຼວຂອງຄະນະກໍາມາທິການແມ່ນໍ້າຂອງເອງເພື່ອຮັບປະກັນເຖິງການຕັດສິນໃຈທີ່ມີປະສິດທິຜົນຂອງເຂດພາກພື້ນຕໍ່ໂຄງການກໍ່ສ້າງບັນດາເຂື່ອນແມ່ນໍ້າຂອງເຫຼົ່ານີ້ ນັບຕັ້ງແຕ່ປີ 2010 ເປັນຕົ້ນມາ, ເຂດພາກພື້ນໄດ້ດໍາເນີນການພິຈາລະນາມາຕະຫຼອດວ່າຈະຕັດສິນໃຈກໍ່ສ້າງເຂື່ອນໃນແມ່ນໍ້າຂອງຫຼືບໍ່ ນັ້ນມັນໄດ້ເປີດໂປງໃຫ້ເຫັນເຖິງຄວາມບໍ່ຊັດເຈນ ແລະ ບັນຫາຕ່າງໆໃນຂະບວນການປົກຄອງບໍລິຫານແມ່ນໍ້າຂອງທີ່ເປັນສາຍນໍ້າຮ່ວມກັນ ແລະ ຈັດການຊັ່ງຊາເຖິງຄວາມຈໍາເປັນ ແລະ ບັນຫາຄວາມກັງວົນຂອງບັນດາປະ ເທດພາຄີໃນເຂດລຸ່ມນໍ້າ ແລະ ເໜືອນໍ້າໃຫ້ມີຄວາມສົມເໝາະດູນກັນ. ເຖິງແມ່ນວ່າລັດຖະບານປະເທດກໍາປູເຈຍ ໄທ ແລະ ຫວຽດນາມຈະມີຂໍ້ຮຽກຮ້ອງໃຫ້ລັດຖະບານ ສປປ ລາວ ດໍາເນີນການສຶກສາຜົນກະທົບເພີ່ມເຕີມ ແລະ ໃຫ້ດໍາເນີນການປຶກສາຫາລື ພ້ອມທັງຄໍາຮຽກຮ້ອງຂອງລັດຖະບານກໍາປູເຈຍ ແລະ ຫວຽດນາມ ທີ່ເລັ່ງທວງໃຫ້ລັດຖະບານລາວເລື່ອນການຕັດສິນໃຈກໍ່ສ້າງເຂື່ອນອອກໄປອີກສິບປີກໍ່ຕາມ ແຕ່ທາງຝ່າຍລາວກໍ່ບໍ່ໄດ້ເອົາຫົວຊາ ແລະໄດ້ລົງມືກໍ່ສ້າງເຂື່ອນໄຊຍະບູລີ ແລະ ເຂື່ອນດອນສະໂຮງໄປແລ້ວ. ຄວາມຫຼົ້ມເຫຼວຂອງຄະນະກໍາມາທິການແມ່ນໍ້າຂອງທີ່ບໍ່ສາມາດຮັບປະກັນການຮ່ວມມືລະຫວ່າງລັດຖະບານຂອງສີ່ປະເທດໃຫ້ເປັນໄປຕາມເນື້ອໃນຂອງສັນຍາແມ່ນໍ້າຂອງປີ 1995 ໄດ້ນັ້ນເປັນບັນຫາກໍ່ໃຫ້ເກີດຄວາມສ່ຽງເພີ່ມຂຶ້ນຈົນກາຍເປັນວິກິດການອັນຮ້າຍແຮງເມື່ອການສຶກສາຜົນກະທົບຂ້າມຊາຍແດນຈາກໂຄງການກໍ່ສ້າງເຂື່ອນເກີດມີຄວາມຫຼົ້ມເຫຼວ

ໃນໄລຍະ 6 ປີຜ່ານມາ, ທາງສຽງຄັດຄ້ານຂອງປວງຊົນຕໍ່ການກໍ່ສ້າງເຂື່ອນໃນແມ່ນໍ້າຂອງໄດ້ເຜີຍແຜ່ຂະຫຍາຍວົງກວ້າງອອກໄປໃນລະດັບຊາດ, ລະດັບພາກພື້ນ ແລະ ລະດັບສາກົນ ດ້ວຍຮູບການຕ່າງໆ ເຊັ່ນໜັງສື ແລະ ຈົດໝາຍຮ້ອງທຸກໄປຍັງລັດຖະບານໃນເຂດພາກພື້ນ ແລະ ຄະນະກໍາມາທິການແມ່ນໍ້າຂອງ ແຕ່ການກໍ່ສ້າງໂຄງການເຂື່ອນເຫຼົ່ານັ້ນກໍ່ຍັງໄດ້ສືບຕໍ່ດໍາເນີນໄປຢ່າງວ່ອງໄວ ແລ້ວດລະ.

ອົງກອນຮ່ວມມືທາງສັງຄົມເພື່ອການປົກປັກຮັກສາແມ່ນໍ້າຂອງສືບຕໍ່ຢືນກາງຄັດຄ້ານຕໍ່ການກໍ່ສ້າງເຂື່ອນຈໍານວນ 11 ແຫ່ງໃນລໍານໍ້າແມ່ນໍ້າຂອງ ທັງນີ້ກໍ່ຍ້ອນວ່າຜົນກະທົບຂ້າມຊາຍແດນທີ່ເກີດຈາກໂຄງການກໍ່ສ້າງເຂື່ອນນັ້ນເປັນບັນຫາທີ່ບໍ່ມີວັນຈະສາມາດຟື້ນຄືນໃຫ້ກັບສູ່ສະພາບປົກກະຕິໄດ້ນັ້ນມັນໄດ້ສົ່ງຜົນຜະທົບຕໍ່ແມ່ນໍ້າສໍາຄັນຍິ່ງ ໆ ເຊິ່ງ ໆ ເປັນແຫຼ່ງອາໄສໃນການລ້ຽງຊີວິດ ແລະ ຄວາມຢູ່ລອດຂອງປະຊາຊົນນັບລ້ານໆຄົນໃນເຂດພາກພື້ນແຫ່ງນີ້

ການຕັດສິນໃຈອັນຖືກຕ້ອງບົນພື້ນຖານຄວາມຮູ້ ແລະ ຂໍ້ມູນອັນຊັດເຈນຕໍ່ການກໍ່ສ້າງເຂື່ອນເຫຼົ່າ
ນີ້ບໍ່ສາມາດທີ່ຈະເປັນໄປໄດ້ ຖ້າຫາກວ່າບໍ່ຢຸດຕິໂຄງການກໍ່ສ້າງເຂື່ອນເຫຼົ່ານີ້ໂດຍທັນທີ ຈົນກວ່າຈະ
ສຳເລັດການສຶກສາປະເມີນຜົນກະທົບຕໍ່ເຂດພາກພື້ນແຫ່ງນີ້ໃນເມື່ອບັນຫາໄພຂົ່ມຂູ່ຈາກເຂື່ອນ
ແມ່ນ້ຳຂອງມີຄວາມຮ້າຍແຮງຄືແນວນັ້ນ,ຜູ້ນຳຂອງພາກພື້ນທັງ ຫຼາຍຈະຕ້ອງຮັບຜິດຊອບ--
ຮ່ວມກັນປຶກສາຫາລື ແລະ ດຳເນີນການແກ້ໄຂໂດຍທັນທີພວກເຮົາອົງກອນຮ່ວມມືທາງສັງຄົມ
ຮຽກຮ້ອງມາຍັງທ່ານຜູ້ນຳເຂດພາກພື້ນດ້ວຍຄວາມເຄົາຣົບນັບຖືເພື່ອໃຫ້ສົມທາລະນາໂດຍຖີ່
ຖ້ວນເຖິງການກໍ່ສ້າງເຂື່ອນໃນແມ່ນ້ຳຂອງ ແລະ ຮັບປະກັນເຮັດໃຫ້ບັນຫານີ້ເປັນປະເດັນໃຈກາງ
ໃນໂອກາດກອງປະຊຸມຄະນະກຳມາທິການແມ່ນ້ຳຂອງໃນໄລຍະອາທິດນີ້ດ້ວຍ ພວກເຮົາຂໍ
ຮຽກຮ້ອງໃຫ້ລັດຖະບານ ສປປ ລາວ ຈົ່ງຢຸດຕິວຽກງານກໍ່ສ້າງທັງໝົດຂອງໂຄງການເຂື່ອນໄຊຍະບູ
ລີ ແລະ ເຂື່ອນດອນຊະໂຮງພ້ອມດຽວກັນນັ້ນ ຂໍຮຽກຮ້ອງມາຍັງລັດຖະລານ ສປປ ລາວ ຈົ່ງໃຫ້
ຄວາມນັບຖືຕໍ່ສິດທິຂອງບັນດາປະເທດເພື່ອນບ້ານໃກ້ຄຽງໃນເຂດອ້ອມແອ້ມອ່າງແມ່ນ້ຳ
ຂອງລວມທັງສິດທິຂອງປະຊາກອນທັງໝົດທີ່ດຳລົງຊີວິດໂດຍອາໄສແມ່ນ້ຳຂອງ ແລະ
ຊັບພະຍາກອນແມ່ນ້ຳຂອງເພື່ອການດຳລົງຊີບ ໂດຍນຳເອົາບັນຫານີ້ເຂົ້າປຶກສາຫາລືກັນຢ່າງຈິງຈັງ
ພາຍໃຕ້ກົດໝາຍສາກົນ. ບໍ່ມີເວລາໃດອີກແລ້ວທີ່ສຳຄັນໄປກວ່າເວລານີ້ພວກເຮົາທັງຫຼາຍຈະ
ຕ້ອງຮ່ວມແຮງຮ່ວມໃຈກັນດຳເນີນທຸກວິທີການເພື່ອປົກປັກຮັກສາແມ່ນ້ຳຂອງໃຫ້ຢູ່ຄູ່ຊີບ
ຕະຫຼອດການ.

ຮັບຮອງໂດຍ:

Both Ends, The Netherlands
Cambodia Volunteers for Society, Cambodia
Cambodian Rural Development Team, Cambodia
Chiang Kong Conservation Group, Thailand
Community Economic Development, Cambodia
Community Resource Centre, Thailand
Corner House, United Kingdom
Earthrights International, USA
Ecosun Cambodia, Cambodia
Fisheries Action Coalition Team, Cambodia
Focus on the Global South, Thailand
Green ID, Vietnam
International Rivers, USA
Living River Siam, Thailand
Jesuit Service Cambodia, Cambodia
Mangrove Action Project, Thailand
Mekong Monitor Tasmania, Australia
Mekong Watch, Japan
Mlup Prum Viheathor Center, Cambodia
My Village, Cambodia
Network of Thai People in Eight Mekong Provinces, Thailand

NGO Forum on Cambodia, Cambodia
PanNature, Vietnam
Ponlok Khmer, Cambodia
Probe International, Canada
REDD-Monitor
Towards Ecological Recovery and Regional Alliance, Thailand
Vietnam Rivers Network, Vietnam
WARECOD, Vietnam
3S Rivers Protection Network, Cambodia